ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
*****

ທະນາຄານແຫ່ງ ສ.ປ.ປ. ລາວ

ກົມຄຸ້ມຄອງທະນາຄານທຸລະກິດ

ເລກທີ 498/ກຄທ

ນະຄອນຫລວງວຽງຈັນ, ວັນທີ 29/ 07 /2013

# ແຈ້ງການ

**ເຖິງ:** ຜູ້ອໍານວຍການທະນາຄານທຸລະກິດ ແລະ ຜູ້ຈັດການສາຂາທະນາຄານທຸລະກິດຕ່າງປະເທດ.

**ເລື່ອງ:** ເພີ່ມທະວີວຽກງານຕ້ານການຟອກເງິນ, ຕ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ການຈັດຕັ້ງປະຕິບັດລະບຽບກົດໝາຍສາກົນທີ່ກ່ຽວຂ້ອງ.

- ອີງຕາມກົດຫມາຍວ່າດ້ວຍ ທະນາຄານ ແຫ່ງ ສປປ ລາວ ເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມກົດຫມາຍວ່າດ້ວຍ ທະນາຄານທຸລະກິດ ເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມດໍາລັດວ່າດ້ວຍການຕ້ານການຟອກເງິນ ສະບັບເລກທີ 55/ນຍ, ລົງວັນທີ 27 ມີນາ 2006.

ສປປ ລາວ ເປັນປະເທດສະມາຊິກຂອງອົງການສະຫະປະຊາຊາດ ແລະ ໄດ້ເຂົ້າຮ່ວມໃນຫຼາຍສົນທິສັນຍາສາກົນ ໂດຍສະເພາະໃນຂົງເຂດວຽກງານຕ້ານການຟອກເງິນ ແລະ ຕ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ. ເພື່ອປະຕິບັດບັນດາລະບຽບກົດໝາຍສາກົນທີ່ກ່ຽວຂ້ອງ ໂດຍສະເພາະບັນຫາທີ່ກ່ຽວຂ້ອງເຖິງຂະແໜງການທະນາຄານ ໃຫ້ຖືກຕ້ອງ ແລະ ເຂັ້ມງວດ, ກົມຄຸ້ມຄອງທະນາຄານທຸລະກິດ ຈຶ່ງແຈ້ງມາຍັງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ທີ່ຕັ້ງຢູ່ ສປປ ລາວ ເພີ່ມທະວີການຈັດຕັ້ງປະຕິບັດວຽກງານຕ້ານການຟອກເງິນ, ຕ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ດັ່ງນີ້:

1. ເພີ່ມທະວີຄວາມເອົາໃຈໃສ່ໃນການຈັດຕັ້ງປະຕິບັດດໍາລັດ ວ່າດ້ວຍການຕ້ານການຟອກເງິນ ແລະ ລະບຽບການຈັດຕັ້ງປະຕິບັດດໍາລັດດັ່ງກ່າວຢ່າງເຂັ້ມງວດ;

2. ການເປີດບັນຊີ-ປິດບັນຊີໃຫ້ລູກຄ້າບຸກຄົນ, ນິຕິບຸຄົນ ທີ່ຕັ້ງ ແລະ ບໍ່ຕັ້ງ ຢູ່ ສປປ ລາວ ໃຫ້ປະຕິບັດຕາມລັດຖະບັນຍັດ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ ແລະ ລະບຽບກ່ຽວຂ້ອງຢ່າງເຂັ້ມງວດ.
3. ຫ້າມໃຫ້ບໍລິການ ຫຼື ດຳເນີນທຸລະກຳກັບບຸກຄົນ, ນິຕິບຸກຄົນ ທີ່ຢູ່ໃນບັນຊີດຳຂອງອົງການສະຫະປະຊາຊາດ ລວມທັງຢູ່ໃນບັນຊີດຳຂອງສະຫະລັດອາເມລິກາ ຊຶ່ງມີຊື່ເປັນພາສາອັງກິດແມ່ນ Specially Designated Nationals and Blocked Persons List ຫຼື SDN List, ຕາມເວບໄຊ ລຸ່ມນີ້:
   - http://www.un.org/sc/committees/1267/aq_sanctions_list.shtml
   - http://www.treasury.gov/resource-center/sanctions/SDN-List/Pages/default.aspx
4. ຊອກຮູ້ລະບຽບກົດໝາຍຂອງສາກົນ ເພື່ອຮັບປະກັນໃຫ້ການດຳເນີນທຸລະກຳກັບຕ່າງປະເທດ ຈັດຕັ້ງປະຕິບັດໄດ້ຢ່າງສອດຄ່ອງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ

ທະນາຄານ ແຫ່ງ ສ.ປ.ປ.ລາວ
ກົມຄຸ້ມຄອງທະນາຄານທຸລະກິດ

ພຸດທະໄຊ ສີວິໄລ